**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ເຈົ້າແຂວງ

ເລກທີ 697 /ຈຂ.ບກ

ບໍ່ແກ້ວ, ວັນທີ 26 ມິຖຸນາ 2014.

# ຄຳສັ່ງ

## ຂອງເຈົ້າແຂວງ ບໍ່ແກ້ວ

## ວ່າດ້ວຍການໂຈະການພິຈາລະນາ ແລະ ອະນຸຍາດໂຄງການລົງທຶນໃໝ່ ສຳລັບການປູກກ້ວຍຫອມໃນຂອບເຂດທົ່ວແຂວງ.

**ເຖິງ:** ບັນດາທ່ານ ເຈົ້າເມືອງ 5 ເມືອງ, ນາຍບ້ານ ແລະ ປະຊາຊົນພາຍໃນແຂວງບໍ່ແກ້ວ.

**ເລື່ອງ:** ໃຫ້ໂຈະການລົງທຶນ ປູກກ້ວຍຫອມ ( ສຳລັບເນື້ອທີ່ໃໝ່ ) ໃນຂອບເຂດ ທົ່ວແຂວງ.

- **ອີງຕາມ:** ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.

- **ອີງຕາມ:** ມະຕິກອງປະຊຸມຄະນະປະຈຳພັກແຂວງ ສະບັບເລກທີ 433/ຄປພຂ.ບກ, ລົງວັນທີ 03 ມິຖຸນາ 2014 ກ່ຽວກັບການໂຈະການລົງທຶນປູກກ້ວຍຫອມ( ສຳລັບເນື້ອທີ່ໃໝ່ ).

- **ອີງຕາມ:** ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009, ມາດຕາ 74.

ຜ່ານມາໄດ້ມີການອະນຸຍາດໃຫ້ ບໍລິສັດ ເອກະຊົນພາຍໃນ ແລະ ຕ່າງປະເທດ ເຊົ່າທີ່ດິນນຳປະຊາຊົນຢ່າງກວ້າງຂວາງໃນການປູກກ້ວຍຫອມ, ແຕ່ໃນປະຈຸບັນຄວາມສາມາດໃນການຕອບສະໜອງເນື້ອທີ່ດິນ, ແຮງງານບໍ່ພຽງພໍ ແລະ ຍັງບໍ່ທັນສຳຫຼວດຈັດສັນເນື້ອທີ່ ການນຳໃຊ້ທີ່ດິນຢ່າງລະອຽດເທື່ອ, ການຈັດຕັ້ງປະຕິບັດຕົວຈິງຫຼາຍຈຸດ ບໍ່ທັນມີປະສິດທິຜົນສູງ ແລະ ໄດ້ສ້າງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ທາງທຳມະຊາດ - ສັງຄົມ ແລະ ມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ.

ເພື່ອຮັບປະກັນ ການພັດທະນາແບບຍືນຍົງ, ການໃຊ້ຊັບພະຍາກອນແບບມີປະສິດທິຜົນສູງ ແລະ ຍືນຍົງ ການປົກປັກຮັກສາສິ່ງແວດລ້ອມ ແລະ ການສົ່ງເສີມກະສິກຳສະອາດ ທີ່ຍືນຍົງ, ສອດຄ່ອງກັບທິດທາງຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ.

**ເຈົ້າແຂວງໆ ບໍ່ແກ້ວ ອອກຄຳສັ່ງ:**

1. ໃຫ້ບັນດາເມືອງ , ພະແນກການ ທີ່ກ່ຽວຂ້ອງຂອງແຂວງ, ຂະແໜງການ ທີ່ກ່ຽວຂ້ອງຂອງເມືອງ, ອຳນາດການປົກຄອງບ້ານ, ປະຊາຊົນທຸກຂັ້ນຄົນ ພາຍໃນແຂວງ ໂຈະການພິຈາລະນາ

ແລະ ອະນຸຍາດໂຄງການລົງທຶນໃໝ່ ສຳລັບການປູກກ້ວຍຫອມ ແລະ ພືດທີ່ບໍ່ທັນໄດ້ຮັບການຈັດສັນ ໃນຂອບເຂດທົ່ວແຂວງ ເພື່ອດຳເນີນການກວດກາ, ປະເມີນຜົນຄືນໃໝ່ ສຳລັບເນື້ອທີ່ການປູກກ້ວຍຫອມ ທີ່ໄດ້ອະນຸມັດໄປແລ້ວ ແລະ ກວດກາປະຕິບັດພັນທະຕ່າງໆ ຕາມສັນຍາ ແລະ ລະບຽບກົດໝາຍ.

2. ໃຫ້ແຕ່ລະເມືອງ ຈັດຕັ້ງຄະນະສະເພາະກິດ ຊຶ່ງປະກອບດ້ວຍ: ຂະແໜງແຜນການ ແລະ ການລົງທຶນ, ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການເງິນ ແລະ ອົງການປົກຄອງທ້ອງຖິ່ນ ເປັນກຳມະການ ເພື່ອດຳເນີນການກວດກາການອະນຸຍາດໃຫ້ນຳໃຊ້ທີ່ດິນ ຂອງສ່ວນບຸກຄົນ ໃຫ້ແກ່ຜູ້ລົງທຶນ ໃນການປູກກ້ວຍຫອມ ແລະ ພືດ ເພື່ອປະເມີນຜົນປະໂຫຍດທີ່ໄດ້ຮັບ ແລະ ຜົນກະທົບຈາກການນຳໃຊ້ທີ່ດິນດັ່ງກ່າວ ແລ້ວລາຍງານໃຫ້ແຂວງຊາບໂດຍໄວ.

3. ໃຫ້ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກ ກະສິກຳ ແລະ ປ່າໄມ້ ຮີບຮ້ອນດຳເນີນວຽກງານສຳຫຼວດ ແລະ ຈັດສັນທີ່ດິນ ໃນຂອບເຂດທົ່ວແຂວງຕາມ ພາລະບົດບາດຂະແໜງການຂອງຕົນ ໃຫ້ໄດ້ເລີ່ມລົງມືໂດຍໄວ, ທັງສະເໜີແຜນວຽກ, ແຜນຄົນ ແລະ ແຜນງົບປະມານ ໃຫ້ແຂວງຄົ້ນຄວ້າ, ພິຈາລະນາ, ເປັນຕົ້ນກຳນົດເຂດ ໃນການນຳໃຊ້ທີ່ດິນ ໃນການຜະລິດເປັນສິນຄ້າໃຫ້ລະອຽດ, ເຂດໃດຈະປູກຫຍັງ, ບໍ່ແມ່ນຈະອະນຸມັດ ການນຳໃຊ້ທີ່ດິນ ແບບກະແຈກກະຈາຍ ໂດຍບໍ່ມີຈຸດສຸມ.

4. ມອບໃຫ້ ພະແນກແຜນການ ແລະ ການລົງທຶນແຂວງ ເຮັດສັນຍາກັບບໍລິສັດເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຄຸ້ມຄອງ, ຕິດຕາມ, ກວດກາປະເມີນຜົນຕໍ່ກິດຈະການປູກກ້ວຍ ແລະ ພືດປະເພດຕ່າງໆ, ຖ້າຫາກມີກໍລະນີລ່ວງລະເມີດລະບຽບກົດໝາຍ ໃຫ້ນຳໃຊ້ມາດຕະການຢ່າງເດັດຂາດ-ເຂັ້ມງວດ.

5. ມອບໃຫ້ ທ່ານ ເຈົ້າເມືອງ, ຫົວໜ້າ ພະແນກການທີ່ກ່ຽວຂ້ອງຂອງ ແຂວງ - ເມືອງ, ນາຍບ້ານ, ປະຊາຊົນພາຍໃນແຂວງ ຈົ່ງຮັບຮູ້ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຕາມຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ, ຖ້າລະເມີດຄຳສັ່ງ ສະບັບນີ້ ຈະຖືກກ່າວເຕືອນ ແລະ ພິຈາລະນາຄວາມຜິດ ທາງກົດໝາຍທີ່ໄດ້ບົ່ງໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

6. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີຄຳສັ່ງປ່ຽນແປງ

ເຈົ້າແຂວງໆ ບໍ່ແກ້ວ.

ແຂວງ ... ເຈົ້າແຂວງ

ຄຳພັນ ສູນວິເລີດ